ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
ຫ້ອງການ

ເລກທີ 1564 /ຫກ.
ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2023

## ແຈ້ງການປະມູນ

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ **02 ພະຈິກ 2017;**
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການຕິດຕັ້ງໝໍ້ແປງໄຟຟ້າ ຂອງສະຖາບັນການເມືອງ ແລະ ການປົກຄອງພາກໃຕ້ ຢູ່ແຂວງ ຈຳປາສັກ; ສະບັບເລກທີ 1451/ສມປຊ, ລົງວັນທີ 06 ຕຸລາ 2023.

ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນຮັບຊາບ ເພື່ອເຂົ້າຮ່ວມໃນການປະມູນ ໂຄງການຕິດຕັ້ງໝໍ້ແປງໄຟຟ້າ ຂອງສະຖາບັນການເມືອງ ແລະ ການປົກຄອງພາກໃຕ້ ຢູ່ແຂວງ ຈຳປາສັກ ປະຈຳປີ 2023; ເຊິ່ງປະກອບມີບັນດາມາດຖານເງື່ອນໄຂ ດັ່ງນີ້:

1. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບໄຟຟ້າ ແລະ ກໍ່ສ້າງທົ່ວໄປ.
2. ບໍລິສັດທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ພະແນກແຜນການ-ການເງິນ ຜູ້ຮັບຜິດຊອບຊື່: ນ. ລຸນນີ ໄຊທະວີເພັດ ເບີ ໂທ 020 55053102 ແລະ ທ ອຸ່ນເຮືອນ ວົງພະຈັນ ເບີ 020 56434441 ໃນໂມງລັດຖະການ.
3. ບໍລິສັດໃດທີ່ຕ້ອງການຊື້ຊອງປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມຂາຍຊອງນັບແຕ່ 16 ຕຸລາ 2023 ເປັນຕົ້ນໄປ, ໃນລາຄາ 3.500.000 (ສາມລ້ານຫ້າແສນກີບ) ກີບ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 06 ພະຈິກ 2023 ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ຊອງປະມູນລາຄາທຸກໆ ຊອງຈະໄດ້ເປີດໃນເວລາ 09:30ໂມງ ຂອງວັນທີ 06 ພະຈິກ 2023 ໂດຍຊ່ອງໜ້າຄະນະຮັບຜິດຊອບໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.
5. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 02% ຂອງລາຄາທີ່ສະເໜີເຂົ້າປະມູນ.
6. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເບີໂທຕິດຕໍ່ 021 752001, 020 55053102 ຫລື 020 56434441

ດັ່ງນັ້ນ,ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຈຶ່ງຂໍແຈ້ງມາຍັງບັນດາບໍລິສັດຕ່າງໆເຂົ້າຮ່ວມການປະມູນຕາມວັນເວລາດ້ວຍ .

ຮັກສາການຫົວໜ້າຫ້ອງການ

ສົມວິກິດ ສິມມະລີວົງ